ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR



# ເມືອງສັງທອງເຜີຍແຜ່ຄວາມຮູ້ເລື່ອງເງິນ




ເມືອງສັງທອງນະຄອນຫຼວງວຽງຈັນຮ່ວມກັບກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງກອງປະຊຸມເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານສະຖາບັນການເງິນ ແລະ ຮອບຮູ້ ເລື່ອງເງິນຂຶ້ນໃນວັນທີ 21 ມີນາ 2018 ທີ່ສະໂມສອນເມືອງສັງທອງ ໂດຍການເຂົ້າຮ່ວມເປັນປະທານຂອງທ່ານ ພົງສະຫວັນ ສີລິພັນ ຮອງເຈົ້າເມືອງ-ເມືອງສັງທອງ ແລະ ທ່ານ ວິໄລມິດ ອັກຄະວົງ ຮອງຫົວໜ້າກົມຄຸ້ມຄອງສະຖາບັນການເງິນ, ພ້ອມນີ້ ກໍມີພະນັກງານຫຼັກແຫຼ່ງ ແລະ ພາກສ່ວນກ່ຽວຂ້ອງໃນທົ່ວເມືອງ ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ນັກວິຊາການຂອງກົມຄຸ້ມຄອງສະຖາບັນການເງິນ ໄດ້ນຳສະເໜີໂດຍສັງເຂບດ້ານພາລະ, ບົດບາດ ແລະ ໜ້າທີ່ຂອງ ທຫລ ເຊິ່ງເປັນທະນາຄານກາງຂອງປະເທດ; ວຽກງານຂໍ້ມູນຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ວຽກງານຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ; ວຽກງານສົ່ງເສີມ, ນຳໃຊ້ ແລະ ວິທີເບິ່ງເງິນກີບ, ການຈັບ

ຈ່າຍຊື້-ຂາຍ ດ້ວຍເງິນກີບ ແລະ ວຽກອື່ນໆທີ່ປິ່ນອ້ອມວຽກງານສະຖາບັນການເງິນ ແລະ ການຮອບຮູ້ ເລື່ອງເງິນ, ທັງນີ້ ກໍເພື່ອເຮັດໃຫ້ອຳນາດການປົກຄອງບ້ານອ້ອມຂ້າງເມືອງ ແລະ ບັນດາພະນັກງານທຸກຂັ້ນ ເຂົ້າໃຈແຈ້ງກ່ຽວກັບວຽກງານສະຖາບັນການເງິນ ພ້ອມທັງໃຫ້ມີການຕິດຕາມ, ກວດກາການເຄື່ອນໄຫວຂອງສະຖາບັນການເງິນ ທີ່ໄດ້ຮັບການອະນຸຍາດຈາກ ທຫລ ແລະໃຫ້ ອົງການຈັດຕັ້ງທຸກພາກສ່ວນ ລວມທັງປະຊາຊົນບັນດາເຜົ່າ ໃຫ້ຊ່ວຍກັນເປັນຫູ, ເປັນຕາ, ບໍ່ໃຫ້ການຮ່ວມມື ແລະ ເປັນກະບອກ ສຽງຕິດຕາມ ກວດກາບັນດາພາກສ່ວນທີ່ເຄື່ອນໄຫວນອກລະບົບຫຼື ເຄື່ອນໄຫວດຳເນີນທຸລະກິດທາງດ້ານການເງິນໂດຍບໍ່ໄດ້ຮັບ ອະນຸຍາດຈາກ ທຫລ.





ກອງປະຊຸມເທື່ອນີ້ ຍັງເປັນການຊຸກຍູ້, ສົ່ງເສີມໃຫ້ສະຖາບັນການເງິນມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ສາມາດຕອບ ສະໜອງທາງດ້ານແຫຼ່ງທຶນໃຫ້ປະຊາຊົນໄດ້ສະດວກຫຼາຍຂຶ້ນ ສາມາດແກ້ໄຂຊີວິດການເປັນຢູ່ໃຫ້ນັບມື້ນັບດີຂຶ້ນເທື່ອລະກ້າວ ແລະທັງເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມໃຫ້ມີຄວາມເຂັ້ມແຂງ ເຊິ່ງໃນຜ່ານມາ ທຫລ ໄດ້ກຳນົດທິດທາງ, ຍຸດທະສາດໃນການຄຸ້ມຄອງແລະ ພັດທະນາຂະແໜງການເງິນ ເພື່ອຫັນເອົາບັນດາສະຖາບັນການເງິນທີ່ເຄື່ອນໄຫວຮູບແບບບໍ່ເປັນທາງການ ເຂົ້າສູ່ລະບົບການຄຸ້ມຄອງໃຫ້ໄປໃນລວງດຽວກັນເທື່ອລະກ້າວແລະ ເພື່ອສ້າງເງື່ອນໄຂໃຫ້ປະຊາຊົນ ສາມາດເຂົ້າຫາແຫຼ່ງທຶນໄດ້ງ່າຍ ແລະ ຫຼາຍຂຶ້ນໃນຕໍ່ໜ້າ.

ທ່ານຮອງເຈົ້າເມືອງສັງທອງ ໃຫ້ທັດສະນະວ່າ: ການເຜີຍແຜ່ຄວາມຮູ້ ກ່ຽວກັບວຽກງານສະຖາບັນການເງິນ ແລະ ຮອບຮູ້ເລື່ອງເງິນໃນຄັ້ງນີ້ເປັນນິມິດໝາຍທີ່ດີ ທີ່ຈະຊ່ວຍໃຫ້ພະນັກງານ ແລະ ປະຊາຊົນເຮົາຕາສະຫວ່າງຂຶ້ນກ່ວາເກົ່າ, ພ້ອມ ທັງເຫັນໄດ້ຢ່າງຈະແຈ້ງບັນດາຄວາມສ່ຽງ ຫຼື ຜົນຮ້າຍທີ່ເປັນອັນຕະລາຍໂດຍກົງຂອງກຸ່ມຄົນບໍ່ດີ ທີ່ໄດ້ຊັກຊວນ, ຕົວະຍົວະ, ຫຼອກລວງປະຊາຊົນເຂົ້າຮ່ວມທຶນດ້ວຍຫຼາຍຮູບແບບ ລວມທັງໃຫ້ຜົນຕອບແທນສູງ ແລະ ບັນຫາການໃຊ້ເງິນປອມ ເຊິ່ງຈະສົ່ງຜົນກະທົບຕໍ່ສະຖຽນລະພາບທາງດ້ານເສດຖະກິດ, ການເງິນ-ເງິນຕາ; ສະນັ້ນ ຈຶ່ງຮຽກຮ້ອງມາຍັງທຸກພາກສ່ວນຕ້ອງເຂົ້າຮ່ວມຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ດັ່ງກ່າວ ບໍ່ໃຫ້ເກີດຂຶ້ນໃນເມືອງສັງທອງ ກໍຄືທົ່ວປະເທດ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ